# ສະບາຍດີ ທ່ານຜູ້ອ່ານທີ່ເຄົາຣົພ ແລະນັບຖື,



"ນິຕຍະສາຣລາວແນັດທ໌" ສະບັບທຳອິດຂອງເດືອນມະກະຣາມີການອອກລ່າຊ້າແກ່ຍາວມາຈົນເຖິງເດືອນ ກູມພາ 2006 ຈຶ່ງສາມາດນຳອອກສູ່ສາຍຕາທ່ານຜູ້ອ່ານທັງນີ້ກໍຍ້ອນວ່າມີຄວາມຫຍຸ້ງຍາກທາງດ້ານເທັກນິກ ແລະການຈັດສິ່ງເຂົ້າສູ່ໂຮງພິມຊັກຊ້າ ມັນກໍເປັນຂອງທັມະດາຂອງການຈັດທຳໃໝ່ທຸກຢ່າງກໍຕ້ອງມີອັນຜິດພາດທີ່ບໍ່ສາມາດຫລີກລ່ຽງໄປໄດ້ກະທັ້ງຕົວອັກສອນລາວແລະອັງກິສກໍມີການພິມຖືກພິມຜິດໄປຫລາຍໆໜ້າເຖິງຢ່າງໃດພວກເຮົາກໍຈະພຍາຍາມທຳການແກ້ໄຂປັບປຸງໃຫ້ດີຂື້ນກວ່າເກົ່າແລະກໍຕ້ອງກາບຂໍອະພັຍກັບບັນດາທ່ານຜູ້ອ່ານທຸກໆທ່ານມານະໂອກາດນີ້ໄປພ້ອມໆກັນ.

ສະບັບນີ້ເປັນສະບັບທີ່ 2 ຂອງເດືອນເມສາ 20006 ຈະສັງເກດເຫັນວ່າພວກເຮົາໄດ້ມີການເພີ້ມສີສັນທັງຮູບໂສມການເຂົ້າໜ້າ ແລະຄໍລັມບາງຢ່າງເພີ້ມເຂົ້າມາໃໝ່ ມີທັງສະປອນເຊີ້ (ຜູ້ທີ່ໃຫ້ການສນັບສນູນອູ້ມຊູຫລາຍໆບໍຣິສັທເປັນທັງຕລາດຮ້ານຄ້າລາວ) ກໍຕ້ອງຂໍຂອບໃຈເປັນຢ່າງສູງກັບນ້ຳໃຈອັນປະເສີດຂອງບັນດາທ່ານທີ່ຈະໄດ້ຊ່ອຍເຮັດໃຫ້ **"ນິຕຍະສາຣລາວແນັດທ໌"** ສະບັບນີ້ມີກຳລັງແຮງທີ່ຈະຢືນຍັດຄູ່ກັບສັງຄົມລາວໃນຕ່າງແດນແລະໃນທົ່ວໂລກຕໍ່ໄປໄດ້ຢ່າງມີປະສິດທິພາບເພື່ອເປັນປາກກະບອກສຽງທີ່ແຫລມຄົມໃຫ້ກັບສັງຄົມລາວໃນທຸກລະດັບຂັ້ນ ແລະເພື່ອຈະເປັນການເປີດກວ້າງທາງດ້ານປະຊາທິປະຕັຍການມີສິດທິເສຣີພາບ ແລະການຮຽນຮູ້ຢູ່ກັບສິ່ງທີ່ໃໝ່ໆຂອງໂລກທີ່ກ້າວໜ້າທັງດ້ານເທັກໂນໂລຍີ່ສມັຍໃໝ່ ແລະຈະຕ້ອງເຂົ້າໃຈຮຽນຮູ້ເຖິງດ້ານກົດໝາຍທຸກຢ່າງທີ່ເຮົາອາສັຍຢູ່ໃນປະເທດນີ້ ວ່າເຮົາຄວນຈະວາງຕົວເຮົາແບບໃດກັນເພື່ອຄວາມປອດພັຍແລະຄວາມຖືກຕ້ອງກັບຊີວິດທາງດ້ານການງານແລະການເປັນຢູ່ທີ່ດີຂື້ນ?

ນິຕຍະສາຣລາວແນັດທ໌ ຈະພຍາຍາມແນະນຳໃນສິ່ງທີ່ດີໆທີ່ເກີດປໂຍດນຳມາພິມເຜີຍແຜ່ ບໍ່ວ່າຈະເປັນດ້ານກົດໝາຍຊຶ່ງເຮົາກໍໄດ້ "ທະນາຍຄວາມອິນໂຕ ຈຳພັນ "ເປັນຜູ້ນຳມາບັນຣະຍາຍຊຶ່ງທ່ານຜູ້ອ່ານສາມາດທີ່ຈະຂຽນປັນຫາທີ່ມີຄວາມຂ້ອງຄາຢູ່ໃນໃຈທ່ານສົ່ງເຂົ້າມາຖາມທະນາຍຂອງເຮົາໄດ້ທຸກໂອກາດ ເຮົາຄິດວ່າທ່ານຈະບໍ່ຜິດຫວັງກັບຄຳຕອບຕົວຈິງທີ່ທ່ານຢາກຈະຮູ້ຕລອດເຖິງປັນຫາອື່ນໆທີ່ເກີດໃກ້ຕົວທ່ານທຸກໆວິນາທີ".

ການທີ່ພວກເຮົາພ້ອມກັນອອກ "ນິຕຍະສາຣລາວແນັດທ໌" ສະບັບນີ້ໃນແນວຄິດພວກເຮົານັ້ນແມ່ນບໍ່ຢາກດັງເພາະບໍ່ມີກຳໄລແຕ່ເພື່ອຜົລປໂຍດອັນຍິ່ງໃຫຍ່ໃນການທີ່ຈະໄດ້ທຳຄຸນປໂຍດເພື່ອເຊີດໜ້າຊູຕາໃຫ້ກັບສັງຄົມລາວໃນຕ່າງແດນທີ່ຖືກປີດຕາຍມາດົນນານແລ້ວນີ້ສາມາດເຂົ້າໄປເຖິງກຸ່ມຄົນຊາວຕ່າງຊາດທີ່ພວກເຂົາໃຫຍ່ກວ່າ



ເຮົາຢູ່ແລ້ວໃຫ້ໄດ້ມາຮຽນຮູ້ກັບວັທນະທັມປະເພນີແລະສັງຄົມຂອງລາວຊຶ່ງມີແນວທີ່ດີໆອີກຢ່າງຫລວງຫລາຍທີ່ພວກເຮົາຍັງບໍ່ທັນເປີດກວ້າງແລະໃນຂນະດຽວກັນ **"ຕາໜ່າງທາງດ້ານຂ່າວສາຣ"** ກໍເປັນສິ່ງທີ່ສຳຄັນຍິ່ງຊຶ່ງພວກເຮົາຈະໄດ້ເຈາະເລິກເຂົ້າໄປເຖິງຂໍ້ມູນໂຕຈິງເພື່ອນຳອອກມາພິມເຜີຍແຜ່ໃຫ້ໄດ້ຢ່າງເປັນຂັ້ນຕອນໄປໃນແຕ່ລະສະບັບຊຶ່ງຈະເປັນການສະຫລູບເນື້ອໃນກ່ຽວກັບເຫດການທີ່ເກີດຂື້ນໂດຍສະເພາະສຳຫລັບປະວັດສາດຜ່ານມາການເມືອງລາວໃນແຕ່ລະຍຸກສມັຍອາດຈະມີຫລາຍໆຂັ້ນຕອນຂອງຄວາມບໍ່ຖືກຕ້ອງທັງແນວດີແລະບໍ່ດີເພື່ອນຳເອົາມາສົມທຽບໃຫ້ທ່ານຜູ້ອ່ານໄດ້ຊ່ອຍກັນວິຈັຍສຶກສາຄົ້ນຄວ້າເຖິງຄຳວ່າສິດທິເສຣີພາບປະຊາທິປະຕັຍແລະຜະເດັດການ ຂອງຊົນຊັ້ນກັມມະຊີພມັນແຕກຕ່າງຢູ່ບ່ອນໃດກັນ

ເຖິງແນວໃດກໍຕາມ **ຄນະກອງບັນນາທິການພວກເຮົາ** ກໍຈະພຍາຍາມນຳເອົາແຕ່ເຣື້ອງທີ່ສ້າງສັນ **"ຄວາມຈິບຄວາມງາມ"** ການສຳພາດບຸກຄົນທີ່ດີເດັ່ນທຸກໆຣະດັບໃນທີ່ນີ້ແລະການຮຽນຮູ້ແບບແຜນກັບຊີວິດໃໝ່ຂອງສັງຄົມໃນທີ່ນີ້ທັງດ້ານເນື້ອໃນແລະໃນທາງປະຕິບັຕນຳມາພິມເຜີຍແຜ່ໃຫ້ກວ້າງອອກໄປເທົ່າທີ່ຈະສາມາດເຮັດໄດ້...ເຖິງຈະຊັກຊ້າໃນການພິມໃນແຕ່ລະສະບັບກໍຍັງດີກວ່າທີ່ເຮົາບໍ່ມີອັນໃດກັນເລີຍ? ດ້ວຍແຮງສນັບສນູນ ແລະອູ້ມຊູຈາກບັນດາທ່ານຜູ້ອ່ານທຸກຮູບນາມຊຶ່ງເປັນຜູ້ທີ່ຢູ່ເບື້ອງຫລັງການທຳງານຂອງພວກເຮົາສິ່ງນັ້ນແຫລະຄືກຳລັງໃຈອັນລ້ຳຄ່າທີ່ສູງສົ່ງຊຶ່ງຈະເປັນແນວທາງແຫ່ງປັນຍາຊ່ອຍເຮັດໃຫ້ການດຳເນີນໜ້າທີ່ນີ້ສາມາດທຳໄດ້ໃນສິ່ງທີ່ຖືກຕ້ອງແລະເປັນປໂຍດຕໍ່ສ່ວນໂຮມຕລອດໄປ".

**ຂໍຂອບໃຈ ເປັນຢ່າງສູງ.**
**ບັນນາທິການພາສາລາວ**
**ບົວເພັດ ພິລາວັນ**